ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ 205/ຫກ

ນະຄອນຫຼວງວຽງຈັນ, ວັນທີ 10 ສິງຫາ 2023

# ໜັງສືແຈ້ງການ

**ເຖິງ:** ພໍ່ແມ່ປະຊາຊົນ, ພໍ່ຄ້າຊາວຂາຍ, ພະນັກງານລັດຖະກອນ, ທະຫານ, ຕໍາຫຼວດ, ຕະຫຼອດຮອດຜູ້ທີ່ຢູ່ອາໄສຢູ່ ສປປ ລາວ ໃນຂອບເຂດທົ່ວປະເທດ.

**ເລື່ອງ:** ໃຫ້ມີສະຕິລະວັງຕົວ ຕໍ່ການເຄື່ອນໄຫວຂອງມິດສາຊີບທີ່ແອບອ້າງເອົາຊື່ທະນາຄານທຸລະກິດມາສ້າງເພຈປອມ ແລ້ວເຄື່ອນໄຫວໂຄສະນາຊວນເຊື່ອວ່າມີການປ່ອຍເງິນກູ້ໃນຮູບແບບອອນລາຍ.

- ອີງຕາມກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ (ສະບັບປັບປຸງ) ເລກທີ 47/ສພຊ, ລົງວັນທີ 19 ມິຖຸນາ 2018;
- ອີງຕາມກົດໝາຍວ່າດ້ວຍທະນາຄານທຸລະກິດ (ສະບັບປັບປຸງ) ເລກທີ 56/ສພຊ, ລົງວັນທີ 07 ທັນວາ 2018;
- ອີງຕາມຂໍ້ມູນທາງສື່ອອນລາຍ (Facebook).

ຫ້ອງການ ທະນາຄານແຫ່ງ ສປປ ລາວ (ທຫລ) ຂໍແຈ້ງມາຍັງທ່ານຊາບວ່າ: ໃນປັດຈຸບັນໄດ້ມີມິດສາຊີບຈໍານວນໜຶ່ງເຄື່ອນໄຫວແອບອ້າງເອົາຊື່ທະນາຄານທຸລະກິດ ຊຶ່ງປະກອບມີ ທະນາຄານພັດທະນາລາວ ແລະ ທະນາຄານຮ່ວມພັດທະນາ ມາສ້າງເພຈປອມຢູ່ Facebook ແລ້ວເຄື່ອນໄຫວໂຄສະນາວ່າສາມາດປ່ອຍເງິນກູ້ໃນຮູບແບບອອນລາຍ ໂດຍມີຂັ້ນຕອນອະນຸມັດທີ່ວ່ອງໄວ, ການກູ້ຢືມແມ່ນງ່າຍດາຍ ພຽງແຕ່ຕ້ອງການບັດປະຈໍາຕົວ ແລະ ປື້ມສໍາມະໂນຄົວ ກໍ່ໄດ້ຮັບເງິນກູ້ທັນທີພາຍໃນເວລາ 30 ນາທີ. ເພຈດັ່ງກ່າວໄດ້ນໍາໃຊ້ໂລໂກ້ທະນາຄານ, ຮູບພາບອີງກອນ, ວີດີໂອ ແລະ ພະນັກງານຂອງທະນາຄານ ໃນການໂຄສະນາດັ່ງກ່າວ, ຜູ້ທີ່ສົນໃຈກູ້ເງິນແມ່ນຕ້ອງໄດ້ໂອນເງິນຊໍາລະຄ່າທໍານຽມກ່ອນ ໂດຍອ້າງວ່າຈະໄດ້ຮັບຄ່າທໍານຽມດັ່ງກ່າວຄືນພ້ອມກັບເງິນກູ້. ຜູ້ທີ່ຫຼົງເຊື່ອໂຄສະນາດັ່ງກ່າວ ເມື່ອໂອນເງິນຄ່າທໍານຽມແລ້ວ ຈະຖືກບລ໋ອກເປີທັນທີ.

ສະນັ້ນ, ຫ້ອງການ ທຫລ ຂໍຖືເປັນກຽດແຈ້ງມາຍັງ ພໍ່ແມ່ປະຊາຊົນ, ພໍ່ຄ້າຊາວຂາຍ, ພະນັກງານລັດຖະກອນ, ທະຫານ, ຕໍາຫຼວດ, ຕະຫຼອດຮອດຜູ້ທີ່ຢູ່ອາໄສຢູ່ ສປປ ລາວ ໃນຂອບເຂດທົ່ວປະເທດ ຈົ່ງມີສະຕິລະວັງຕົວ ແລະ ບໍ່ໃຫ້ຫຼົງເຊື່ອຕໍ່ການໂຄສະນາລັກສະນະດັ່ງກ່າວ. ທະນາຄານແຫ່ງ ສປປ ລາວ ຍັງບໍ່ໄດ້ອະນຸຍາດໃຫ້ທະນາຄານທຸລະກິດໃດໃນ ສປປ ລາວ ປ່ອຍກູ້ຜ່ານລະບົບອອນລາຍ.

**ເຊັນແທນຫົວໜ້າຫ້ອງການ**

**ຮອງຫົວໜ້າຫ້ອງການ**

ສຸກັນ ຈັນທະວົງ

ທະນາຄານແຫ່ງ ສປປ ລາວ, ຖະໜົນ ຍອນເນ, ນະຄອນຫຼວງວຽງຈັນ, ຕູ້ໄປສະນີ 19, ໂທລະພິມ: 4304 BNL.VTE.LS

ໂທລະສານ: (856)-21-213108 ໂທລະສັບ: 213109-213110 Email: BOL@bol.gov.la; www.bol.gov.la